ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0280/ອຄ.ກນຄຕ

ນະຄອນຫຼວງວຽງຈັນ, ວັນທີ 27 FEB 2017

**ບົດແນະນຳ**

**ກ່ຽວກັບການຈັດຕັ້ງປະຕິບັດບາງມາດຕາ ຂອງສັນຍາວ່າດ້ວຍການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ**

- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ: 522/ນຍ, ລົງວັນທີ: 23 ທັນວາ 2011.
- ອີງຕາມສັນຍາວ່າດ້ວຍການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ສະບັບລົງວັນທີ 27 ມິຖຸນາ 2015.

ເພື່ອເຮັດໃຫ້ເນື້ອໃນຂອງສັນຍາວ່າດ້ວຍການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ມີປະສິດທິຜົນ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດບາງມາດຕາຂອງການໃຫ້ສິດພິເສດຈາກ ສສ ຫວຽດນາມ ແລະ ພັນທະທີ່ ສປປ ລາວ ຕ້ອງປະຕິບັດ ຄືດັ່ງນີ້:

## I. ສິດພິເສດທີ່ຫວຽດນາມໃຫ້ແກ່ລາວ

ສິດພິເສດດ້ານການຄ້າທີ່ຝ່າຍຫວຽດນາມ ໃຫ້ແກ່ຝ່າຍລາວ ມີ 03 ລະດັບ ດັ່ງນີ້:

### 1. ລະດັບເມືອງຊາຍແດນ:

ມາດຕາ 5.4 ຂອງສັນຍາການຄ້າຊາຍແດນລາວ-ຫວຽດນາມ ໄດ້ກຳນົດວ່າ: ສິນຄ້າທີ່ຜະລິດ, ສັດທີ່ລ້ຽງ ແລະ ພືດອຸດສາຫະກຳທີ່ປູກໂດຍປະຊາຊົນທີ່ອາໄສຢູ່ຕາມເມືອງຊາຍແດນຂອງ ສປປ ລາວ ແລະ ໄດ້ຮັບການຢັ້ງຢືນໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລາວ, ລວມທັງການຢັ້ງຢືນສຸຂານາໄມ-ສຸຂານາໄມພືດ ແລະ ສັດ ແມ່ນຕ້ອງໄດ້ຮັບການຍົກເວັ້ນພາສີນຳເຂົ້າ ແລະ ອາກອນອື່ນໆ ເວລານຳເຂົ້າໄປຫວຽດນາມ ແລະ ບໍ່ຕ້ອງຂໍໃບອະນຸຍາດນຳເຂົ້າຕ່າງໆ, ບໍ່ຕ້ອງຜ່ານການກວດກາສຸຂານາໄມ-ສຸຂານາໄມພືດ ແລະ ສັດ, ມາດຕະການເຕັກນິກ ແລະ ກວດກາຄວາມປອດໄພດ້ານອາຫານ, ຍົກເວັ້ນໃນກໍລະນີທີ່ມີການແຈ້ງເຕືອນຂອງເຈົ້າໜ້າທີ່ຝ່າຍໃດຝ່າຍໜຶ່ງຂອງຄູ່ສັນຍາກ່ຽວກັບຄວາມສ່ຽງຂອງສິນຄ້າສະເພາະໃດໜຶ່ງ.

2. ລະດັບແຂວງຊາຍແດນ:

ມາດຕາ 7 ຂອງສັນຍາການຄ້າຊາຍແດນລາວ-ຫວຽດນາມ ໄດ້ກຳນົດວ່າ:

2.1 ສິນຄ້າກະສິກຳທີ່ຜະລິດ ແລະ ຍັງບໍ່ທັນປຸງແຕ່ງ, ສັດທີ່ລ້ຽງ ແລະ ພືດອຸດສາຫະກຳທີ່ປູກໂດຍປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະຝ່າຍ ຕ້ອງໄດ້ຮັບການຍົກເວັ້ນອັດຕາພາສີນຳເຂົ້າ ແລະ ອາກອນມູນຄ່າເພີ່ມ ເມື່ອນຳເຂົ້າຫວຽດນາມ ຕາມທີ່ໄດ້ລະບຸຢູ່ເອກະສານຊ້ອນທ້າຍ 02 ຂອງສັນຍາ.

2.2 ສິນຄ້າທີ່ຜະລິດ, ສັດທີ່ລ້ຽງ ແລະ ພືດອຸດສາຫະກຳທີ່ປູກໂດຍປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະຝ່າຍ ຕ້ອງໄດ້ຮັບການຍົກເວັ້ນອັດຕາພາສີຂາເຂົ້າເມື່ອນຳເຂົ້າຫວຽດນາມ ຕາມທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ 03 ຂອງສັນຍາ.

2.3 ສິນຄ້າທີ່ຜະລິດ, ສັດທີ່ລ້ຽງ ແລະ ພືດອຸດສາຫະກຳທີ່ປູກໂດຍປະຊາຊົນ ແລະ ນັກທຸລະກິດ ທີ່ອາໄສຢູ່ແຂວງຊາຍແດນຂອງ ສປປ ລາວ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະຝ່າຍ ຕ້ອງບໍ່ມີການຈຳກັດໂກຕາ ແລະ ການອະນຸຍາດນຳເຂົ້າອື່ນໆ ເມື່ອນຳເຂົ້າຫວຽດນາມ.

3. ລະດັບທົ່ວປະເທດ:

ຂໍ້ 1 ຂອງມາດຕາ 6 ໄດ້ກຳນົດວ່າ: ຫວຽດນາມ ຕ້ອງໃຫ້ບູລິມະສິດອັດຕາພາສີ 0% ແກ່ສິນຄ້າທີ່ມີແຫຼ່ງກຳເນີດຈາກ ສປປ ລາວ ທີ່ໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍ 01 ຂອງສັນຍາ. ເຈົ້າໜ້າທີ່ການຄ້າຂອງ ສປປ ລາວ ຕ້ອງອອກໃບຢັ້ງຢືນແຫຼ່ງກຳເນີດ ສຳລັບສິນຄ້າທີ່ນຳເຂົ້າໄປຫວຽດນາມ.

ທຸກແຂວງຂອງ ສປປ ລາວ ລວມທັງນະຄອນຫຼວງວຽງຈັນ ລ້ວນແຕ່ສາມາດນຳໃຊ້ສິດພິເສດທີ່ຝ່າຍຫວຽດນາມໃຫ້ແກ່ຝ່າຍລາວ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕາ 6.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ອອກໃບຢັ້ງຢືນແຫຼ່ງກຳເນີດສຳລັບສິນຄ້າທີ່ນຳເຂົ້າໄປຫວຽດນາມ ຕາມທີ່ລະບຸໄວ້ໃນເອກະສານຊ້ອນທ້າຍ 01 ຂອງສັນຍາ. ສ່ວນການປະກອບເອກະສານເພື່ອຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ປະຕິບັດຕາມຂໍ້ III ຂອງບົດແນະນຳສະບັບນີ້.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງພິຈາລະນາອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ໂດຍໄວ ຖ້າເອກະສານຄົບຖ້ວນ, ຢ່າງຊ້າບໍ່ໃຫ້ກາຍ 02 ວັນລັດຖະການ.

II. ພັນທະທີ່ ສປປ ລາວ ຕ້ອງປະຕິບັດ

ເພື່ອນຳໃຊ້ສິດພິເສດຕາມທີ່ໄດ້ລະບຸໄວ້ໃນຂໍ້ I ຂອງບົດແນະນຳສະບັບນີ້, ເຈົ້າໜ້າທີ່ທີ່ມີສິດຂອງ ສປປ ລາວ ຕ້ອງອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບຢັ້ງຢືນການບໍ່ເປັນພະຍາດຂອງພືດ, ສັດ ແລະ ອາຫານທີ່ນຳເຂົ້າໄປຫວຽດນາມ ຊຶ່ງເຈົ້າໜ້າທີ່ທີ່ມີສິດຂອງ ສສ ຫວຽດນາມ ຈະຕ້ອງຮັບຮູ້ການຢັ້ງຢືນດັ່ງກ່າວ.

## III. ເອກະສານປະກອບເພື່ອຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ບຸກຄົນ, ນັກທຸລະກິດ ຫຼື ບໍລິສັດທີ່ຕ້ອງການນຳໃຊ້ສິດພິເສດຕາມທີ່ໄດ້ກຳນົດໄວ້ໃນສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຕາມແບບຟອມທີ່ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າກຳນົດໃຫ້.
2. ສຳເນົາບັດປະຈຳຕົວ ຫຼື ສຳເນົາປຶ້ມສຳມະໂນຄົວ, ຖ້າເປັນປະຊາຊົນ.
3. ສຳເນົາບັດປະຈຳຕົວ ຫຼື ສຳເນົາໃບທະບຽນວິສາຫະກິດ, ຖ້າເປັນນັກທຸລະກິດ ຫຼື ບໍລິສັດ.

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງພິຈາລະນາອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ໂດຍໄວ ຖ້າເອກະສານຄົບຖ້ວນ, ຢ່າງຊ້າບໍ່ໃຫ້ກາຍ 02 ວັນລັດຖະການ.

## IV. ຂອບເຂດການນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ອອກໂດຍພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ສາມາດນຳໃຊ້ໃນຂອບເຂດຄວາມຮັບຜິດຊອບຂອງຕົນເທົ່ານັ້ນ.

## V. ການຈັດຕັ້ງປະຕິບັດ

1. ມອບໃຫ້ກົມນະໂຍບາຍການຄ້າຕ່າງປະເທດ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຈັດຕັ້ງເຜີຍແຜ່ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ຮັບຮູ້ຢ່າງທົ່ວເຖິງ ແລະ ເປັນເຈົ້າການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.
2. ໃນການຈັດຕັ້ງປະຕິບັດ ຫາກມີບັນຫາຕ່າງໆເກີດຂຶ້ນ ໃຫ້ລາຍງານກະຊວງອຸດສາຫະກຳ ແລະ ການຄ້າ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂຢ່າງທັນການ.
3. ໃນກໍລະນີທີ່ມີບາງເນື້ອໃນຂອງສັນຍາຊຶ່ງບົດແນະນຳສະບັບນີ້ ບໍ່ໄດ້ກ່າວເຖິງ ແມ່ນໃຫ້ຖືເອົາເນື້ອໃນສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ເປັນຫຼັກ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

(ຮ່າງ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

## ໃບຄຳຮ້ອງຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ
## ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ

ຮຽນ:.......................................................................................

**ເລື່ອງ: ສະເໜີຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕາມສັນຍາການຄ້າຊາຍແດນລາວ-ຫວຽດນາມ**

ຂ້າພະເຈົ້າ ຊື່ ແລະ ນາມສະກຸນ:..................................ຖືບັດປະຈຳຕົວ ຫຼື ປື້ມສຳມະໂນຄົວ (ຖ້າເປັນປະຊາຊົນ)/ ຖືບັດປະຈຳຕົວ ຫຼື ໃບທະບຽນວິສາຫະກິດ (ຖ້າເປັນນັກທຸລະກິດ ຫຼື ບໍລິສັດ) ເລກທີ: ............................ ລົງວັນທີ:............................, ອອກໃຫ້ໂດຍ: ..........................

ມີຈຸດປະສົງສະເໜີຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າສຳລັບລາຍການສິນຄ້າ ດັ່ງລຸ່ມນີ້:

| ລ/ດ | ຊື່ລາຍການສິນຄ້າ | ລະຫັດພາສີຂອງສິນຄ້າ HS (ຖ້າມີ) | ສິນຄ້າມີແຫຼ່ງກຳເນີດມາຈາກເມືອງ/ ແຂວງ ຫຼື ນະຄອນຫຼວງວຽງຈັນ |
|---|---|---|---|
| | | | |

ຂ້າພະເຈົ້າຂໍຢັ້ງຢືນວ່າ ຂໍ້ມູນຂ້າງເທິງນັ້ນແມ່ນຄວາມຈິງທຸກປະການ.

ດັ່ງນັ້ນ, ຈຶ່ງໄດ້ສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ທີ່................., ວັນທີ.................

ລາຍເຊັນຜູ້ຮ້ອງຂໍ

ຊື່ແຈ້ງ

(ປະທັບຕາ ຖ້າເປັນບໍລິສັດ)

(ຮ່າງ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕາມສັນຍາການຄ້າຊາຍແດນ ລາວ-ຫວຽດນາມ**

ເລກທີ:................

ລົງວັນທີ:................

| ຊື່ບໍລິສັດ ຫຼື ຜູ້ສົ່ງອອກ:<br><br>ທີ່ຢູ່: ບ້ານ.............................<br>ເມືອງ...............................ແຂວງ..............................<br>ເບີໂທ....................................<br>ເບີແຟັກ........................................... | | | ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງວຽງຈັນ:<br>..........................................................................................................................<br>ເບີໂທ:.......................................................................................<br>ເບີແຟັກ:......................................................................................<br>ອີເມວ:....................................................................................... | | |
|---|---|---|---|---|---|
| ລ/ດ | ລາຍການສິນຄ້າສົ່ງອອກ ຕາມສັນຍາການຄ້າຊາຍແດນ | ລະຫັດພາສີຂອງສິນຄ້າ HS (ຖ້າມີ) | ເມືອງ/ ແຂວງ ທີ່ເປັນແຫຼ່ງກຳເນີດຂອງສິນຄ້າ ໂດຍມີຊາຍແດນຕິດກັບຫວຽດນາມ | ເມືອງ/ແຂວງ ຫຼື ນະຄອນຫຼວງວຽງຈັນ ທີ່ເປັນແຫຼ່ງກຳເນີດຂອງສິນຄ້າ ໂດຍບໍ່ມີຊາຍແດນຕິດກັບຫວຽດນາມ | ເມືອງ/ແຂວງ ທີ່ເປັນແຫຼ່ງກຳເນີດຂອງສິນຄ້າ ພາຍໃຕ້ການລົງທຶນຂອງນັກລົງທຶນຫວຽດນາມ |
| | | | | | |

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ/ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງວຽງຈັນ ຢັ້ງຢືນວ່າ ຂໍ້ມູນທັງໝົດທີ່ກຳນົດໄວ້ໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ມີຄວາມຖືກຕ້ອງ ແລະ ມີຄວາມຈິງທຸກປະການ.

(ຊື່ອົງການທີ່ອອກໃບຢັ້ງຢືນ)

ລາຍເຊັນເຈົ້າໜ້າທີ່ທີ່ມີສິດອອກໃບຢັ້ງຢືນ

ປະທັບຕາອົງການທີ່ອອກໃບຢັ້ງຢືນ